ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຂະແໜງທະນາຄານສົມທົບເງິນເຂົ້າໃນ ວຽກງານຕ້ານການລະບາດຂອງພະຍາດ COVID-19




ໃນຕອນບ່າຍຂອງວັນທີ 04 ພຶດສະພາ 2020 ທີ່ ສຳນັກງານນາຍົກລັດຖະມົນຕີ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມອບເງິນໃຫ້ແກ່ລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານການສະກັດກັ້ນ ແລະ ຕ້ານການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ ເຊິ່ງມອບໂດຍ ທ່ານ ພຸດທະໄຊ ສີວິໄລ, ຮອງຜູ້ວ່າການ ທຫລ, ຫົວໜ້າຄະນະຮັບຜິດຊອບປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກ ສາຍພັນໃໝ່ (COVID-2019) ຢູ່ ທຫລ ແລະ ໃຫ້ກຽດຮັບໂດຍທ່ານ ຮສ.ດຣ. ບຸນກອງ ສີຫາວົງ ລັດຖະມົນຕີກະຊວງສາທາລະນະສຸກ, ຮອງຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ລວມຈຳນວນເງິນທີ່ມອບທັງໝົດ 500.000.000 ກີບ ເຊິ່ງເງິນຈຳນວນດັ່ງກ່າວແມ່ນໄດ້ມາຈາກການລະດົມທຶນຂອງ ທຫລ ນຳບັນດາທະນາຄານທຸລະກິດ ເຊິ່ງປະກອບມີ: ພາກສ່ວນ ທຫລ ສົມທົບ 224.664.860 ກີບ, ທະນາຄານນະໂຍບາຍ 71.650.000 ກີບ, ທະນາຄານແຄນນາເດຍລາວ ຈຳກັດ 50.000.000 ກີບ, ທະນາຄານສົ່ງເສີມກະສິກຳ 40.000.000 ກີບ, ກຸ່ມທະນາຄານທຸລະກິດໄທ 8 ທະນາຄານໃນ ສປປ ລາວ 20.000.000 ກີບ, ທະນາຄານພັດທະນາລາວ 19.000.000 ກີບ, ທະນາຄານ ໄຕ້ຫວັນ 13.471.500 ກີບ, ທະນາຄານ ເຟີດ ຄອມເມີໂຊ ແບັງ ຈຳກັດ 13.455.000 ກີບ, ທະນາຄານການຄ້າຕ່າງປະເທດ ຫວຽດນາມ ປະຈຳລາວ ຈຳກັດ (Vietcom Bank) 12.758.640 ກີບ, ທະນາຄານລາວຈີນ ຈຳກັດ 10.000.000 ກີບ, ທະນາຄານເອຊີລີດາລາວ ຈຳກັດ 10.000.000 ກີບ, ທະນາຄານຫຸ້ນສ່ວນການຄ້າທະຫານ ສາຂາລາວ (MB Bank) 10.000.000 ກີບ ແລະ ທະນາຄານອາເຣັສບີ ລາວ ຈຳກັດ 5.000.000 ກີບ.



ໃນປັດຈຸບັນສະພາບການແຜ່ລະບາດຂອງເຊື້ອພະຍາດ COVID-19 ທີ່ໄດ້ແຜ່ລາມໄປຢ່າງກວ້າງຂວາງໃນທົ່ວໂລກ ອັນໄດ້ເຮັດໃຫ້ເກີດມີຜູ້ຕິດເຊື້ອ 3 ລ້ານກວ່າຄົນ, ເສຍຊີວິດ 2 ແສນກວ່າຄົນ. ສຳລັບຢູ່ ສປປ ລາວ ມີຜູ້ຕິດເຊື້ອພະຍາດ COVID-19 ສະສົມ 19 ຄົນ ແລະ ຍັງສືບຕໍ່ຕິດຕາມປິ່ນປົວຢູ່ໂຮງໝໍມິດຕະພາບ 10 ຄົນ; ຕໍ່ກັບບັນຫາດັ່ງກ່າວ, ຂະແໜງການທະນາຄານກໍ່ໄດ້ເອົາໃຈໃສ່ຍົກສູງການຈັດຕັ້ງປະຕິບັດຕາມມາດຕະການຂອງຄະນະສະເພາະກິດ ກໍ່ຄືລັດຖະບານວາງອອກຢ່າງເຄັ່ງຄັດ, ໂດຍສະເພາະຕາມຈຸດທີ່ໃຫ້ບໍລິການລູກຄ້າຂອງບັນດາທະນາຄານທຸລະກິດ ກໍ່ໄດ້ມີການກວດອຸນຫະພູມ ແລະ ໃຊ້ອຸປະກອນຂ້າເຊື້ອໃຫ້ແກ່ຄົນທີ່ຜ່ານຈຸດເຂົ້າ-ອອກ, ເອົາໃຈໃສ່ອະນາໄມຂ້າເຊື້ອຕາມພື້ນທີ່ພາຍໃນອາຄານສຳນັກງານເປັນປະຈຳ, ໃຫ້ພະນັກງານຂອງທະນາຄານສວມໃສ່ອຸປະກອນປ້ອງກັນການຕິດເຊື້ອ ແລະ ອື່ນໆ.

ໃນໂອກາດດຽວກັນນີ້, ທ່ານ ຣສ.ດຣ. ບຸນກອງ ສີຫາວົງ, ລັດຖະມົນຕີກະຊວງສາທາລະນະສຸກ, ຮອງຫົວໜ້າຄະນະສະເພາະກິດ ໄດ້ສະແດງຄວາມຂອບໃຈ ແລະ ຍ້ອງຍໍຊົມເຊີຍມາຍັງ ທຫລ ກໍ່ຄືຂະແໜງທະນາຄານທີ່ໄດ້ມີນ້ຳໃຈປະກອບສ່ວນໃນການຄວບຄຸມການແຜ່ລະບາດຂອງເຊື້ອພະຍາດ COVID-19 ຊຶ່ງຈະເປັນການຊ່ວຍບັນເທົາຄວາມຫຍຸ້ງຍາກຂອງວຽກງານດັ່ງກ່າວໃນໄລຍະນີ້.

**# ຂ່າວ: ວັນປະເສີດ ສົມບູນຂັນ**

**# ພາບ: ສົມອິກ ເຄນຄຳແພງ**